II. <u>ລາຍງານການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ</u> (ປະຈຳໄຕມາດ II ປີ 2016)

1. <u>ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບໃນຕ່າງປະເທດ</u>

ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດໃນໄຕມາດທີ່ຜ່ານມາທຽບກັບໄຕມາດນີ້ ມີລາຍລະອຽດ ດັ່ງລຸ່ມນີ້:

**ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ**: ດັດຊະນີ Dow Jones ປັບຕົວເພີ່ມຂຶ້ນ 1,87%, S&P500 2,56% ແລະ NASDAQ 1,57%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ ປັບຕົວເພີ່ມຂຶ້ນແມ່ນເນື່ອງຈາກ ທ່ານນາງ ເຈເນັດ ເຢເລັນ ປະທານທະນາຄານກາງ ສ.ອາເມລິກາ ຫຼື FED ໄດ້ກ່າວທີ່ປະຊຸມວ່າ ເສດຖະກິດຂອງ ສ.ອາເມລິກາຢູ່ໃນທິດທາງທີ່ດີ ແລະ ອຳນວຍຕໍ່ການປັບຂຶ້ນອັດຕາດອກເບ້ຍ ປະກອບກັບ ສະຖາບັນຈັດການດ້ານອຸປະທານຂອງ ສ.ອາເມລິກາ (ISM) ລາຍງານວ່າ ພາກການຜະລິດຂອງ ສ.ອາເມລິກາ ມີການຂະຫຍາຍຕົວຕິດຕໍ່ກັນ 3 ເດືອນ ໃນເດືອນ ພຶດສະພາ ໂດຍດັດຊະນີພາກການຜະລິດໃນເດືອນ ພຶດສະພາແມ່ນຢູ່ທີ່ 51,3% ເຊິ່ງເປັນການເພີ່ມຂຶ້ນຈາກລະດັບ 50,8% ໃນເດືອນ ເມສາ ເຊິ່ງສະແດງ ການຟື້ນຕົວຂອງເສດຖະກິດ ສ.ອາເມລິກາ ທີ່ດີຂຶ້ນ.

**ດັດຊະນີຕະຫຼາດຫຼັກຊັບໃນເອີຣົບ**: ດັດຊະນີ ເອີຣົບ (Eurofirst 300) ປັບຕົວຫຼຸດລົງ -0,04%, ຝຣັ່ງ (CAC40) -1,28%, ເຢຍລະມັນ (DAX) -0,07% ຍົກເວັ້ນ ດັດຊະນີ ຕະຫຼາດຫຼັກຊັບ ລຸກຊຳບວກ (LUXXX) ປັບຕົວເພີ່ມຂຶ້ນ 5,96% ແລະ ອັງກິດ (FTSE100) 0,44%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນເອີຣົບປັບຕົວຫຼຸດລົງແມ່ນເນື່ອງຈາກ ຜູ້ລົງທຶນຫຼຸດຜ່ອນການເຄື່ອນໄຫວຊື້-ຂາຍພາຍຫຼັງຈາກທີ່ສະຫະພາບເອີຣົບ ຫຼື EU ຄາດວ່າ ເສດຖະກິດໃນຂົງເຂດເອີຣົບ ຈະຂະຫຍາຍຕົວພຽງ 1,6% ໃນປີນີ້ ຫຼຸດລົງ ຈາກທີ່ຄາດການກ່ອນໜ້ານີ້ທີ່ 1,8% ແລະ ການປະກາດການຂາດທຶນຈາກການດຳເນີນທຸລະກິດຂອງບໍລິສັດ ຈົດທະບຽນ ທີ່ມີການການເປີດເຜີຍໃນໄຕມາດນີ້ ໃນຂະ ນະທີ່ ລາຄານ້ຳມັນໂລກຍັງມີຄວາມຜັນຜວນ ປະກອບກັບ ວິກິດການ ການລົງປະຊາມັດຕິຂອງ ປະເທດອັງກິດຕໍ່ກັບການທີ່ ປະເທດອັງກິດຈະຍັງຄົງຢູ່ ຫຼື ຈະອອກຈາກເອີຣົບ ໄດ້ສ້າງແຮງກົດດັນຕໍ່ໂລກຕະຫຼາດການເງິນໂລກ.

**ດັດຊະນີຕະຫຼາດຫຼັກຊັບໃນອາຊີ**: ດັດຊະນີ ອາຊຽນ (ASEAN 40) ປັບຕົວຫຼຸດລົງ -1,75%, ໄຕ້ຫວັນ (TWSE) -0,93%, ສິງກະໂປ (STRAIT TIMES) -3,21%, ສ.ເກົາຫຼີ (KOSPI) -0,62%, ມາເລເຊຍ (FBMLCI) -5,04%, ກຳປູເຈຍ (CSX) ປັບຕົວຫຼົດລົງ -3,79%, ຍີ່ປຸ່ນ (NIKKEI225) -4,89%, , ສປ.ຈີນ (SHANGHAI) -4,37% ແລະ ສປ.ຈີນ (SHENZHEN) -0,67%. ຍົກເວັ້ນ ຕະຫຼາດຫຼັກຊັບ ຟີລິບປິນ (PCOMP) ປັບຕົວເພີ່ມຂຶ້ນ 5,53%, ຕະຫຼາດຫຼັກຊັບ ໄທ (SET) 1,32%, ສສ. ຫວຽດນາມ (HOCHIMIN) 9,27%, ອົດສະຕາລີ (S&P/ASX200) 2,57%, ອິນໂດເນເຊຍ (JCI) 0,51% ແລະ ສສ.ຫວຽດນາມ (HANOI) 4,88% ແລະ ຮ່ອງກົງ (HANG SENG) 0,26% ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນ ອາຊີສ່ວນໃຫຍ່ປັບຕົວຫຼຸດລົງແມ່ນເນື່ອງຈາກ ການແຂງຄ່າຂອງເງິນເຢນສົ່ງຜົນໃຫ້ຮຸ້ນກຸ່ມບໍລິສັດສົ່ງອອກຂອງຍີ່ປຸ່ນປັບຕົວຫຼຸດລົງ ແລະ ຜູ້ລົງທຶນເລີ່ມກັງວົນຕໍ່ທ່າທີຂອງ ທະນາຄານກາງຍີ່ປຸ່ນ ວ່າອາດຈະຫຼຸດການດຳເນີນນະໂຍບາຍການເງິນຫຼຸດລົງ, ນອກຈາກນີ້, ຍັງມີຂ່າວວ່າດັດຊະນີຕະຫຼາດຫຼັກຊັບ ສປ ຈີນ ອາດບໍ່ຖືກລວມເຂົ້າໃນ ດັດຊະນີ MSCI Emerging Market Index ໄດ້ສ້າງຄວາມຜິດຫວັງໃຫ້ແກ່ຜູ້ລົງທຶນ ຕໍ່ກັບໂອກາດການດຶງເມັດເງິນລົງທຶນຈາກກອງທຶນຕ່າງໆເຂົ້າສູ່ຕະຫຼາດຫຼັກຊັບ ສປ. ຈີນ ລົງ ຄຽງຄູ່ກັບບັນຍາກາດແຮງກົດດັນຂອງສະຖານະການປະເທດອັງກິດ ທີ່ແຜ່ລາມມາເຖິງຕະຫຼາດຫຼັກຊັບໃນອາຊີ.

II. <u>ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວ ໃນໄຕມາດນີ້ປິດຢູ່ທີ່ 1.127,40 ຈຸດ ຫຼຸດລົງ 3,08% ເມື່ອທຽບໃສ່ໄຕມາດຜ່ານມາ, ຕະຫຼອດໄຕມາດມີປະລິມານຊື້-ຂາຍຮຸ້ນທັງໝົດ 2,50 ລ້ານຮຸ້ນ ແລະ ມີມູນຄ່າການ ຊື້-ຂາຍ 11,71 ຕື້ກີບ ຫຼຸດລົງ 70,02% ທຽບໃສ່ໄຕມາດຜ່ານມາ. ໂດຍໄຕມາດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 60,89% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 4.410 ກີບ ເພີ່ມຂຶ້ນ 2 ກີບ ເມື່ອທຽບໃສ່ໄຕມາດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 1,10 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 4,88 ຕື້ກີບ ຫຼຸດລົງ 33,23% ເມື່ອທຽບໃສ່ໄຕມາດຜ່ານມາ. ໂດຍໄຕມາດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 40,20% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,31%[1].

ຮຸ້ນຂອງບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.716 ກີບ ຫຼຸດລົງ 177 ກີບ ເມື່ອທຽບໃສ່ໄຕມາດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 1,01 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 5,78 ຕື້ກີບ ຫຼຸດລົງ 80,67% ເມື່ອທຽບໃສ່ໄຕມາດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 53,63% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,83%[2].

ຮຸ້ນຂອງບໍລິສັດລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 6.333 ກີບ ຫຼຸດລົງ 643 ກີບ ເມື່ອທຽບໃສ່ໄຕມາດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 900 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 5,70 ລ້ານກີບ ເພີ່ມຂຶ້ນ 46,95% ເມື່ອທຽບໃສ່ໄຕມາດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 30% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[3].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.630 ກີບ ຫຼຸດລົງ 243 ກີບ ເມື່ອທຽບໃສ່ໄຕມາດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 335.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 883,04 ລ້ານກີບ ຫຼຸດລົງ 7,23% ເມື່ອທຽບໃສ່ໄຕມາດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 63,38% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,66%[4].

ຮຸ້ນຂອງບໍລິສັດ ສຸວັນນີໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍສະເລ່ຍ 3.166 ກີບ ຫຼຸດລົງ 190 ກີບ ເມື່ອທຽບໃສ່ໄຕມາດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 49.300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 156,10 ລ້ານກີບ ຫຼຸດລົງ 82,14% ເມື່ອທຽບໃສ່ໄຕມາດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ SVN ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,20%[5].

**ຮັກສາການຫົວໜ້າພະແນກຄຸ້ມຄອງຕະຫຼາດຫຼັກຊັບ**

ທ. ບຸນຈິງ ກອງຄຳ

**ຕາຕະລາງ1: ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)**

---

[1]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[2]ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[3]ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[4]ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

[5]ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

| | ໄຕມາດ 1 | | ໄຕມາດ 2 | | % ການປ່ຽນແປງ | |
|---|---|---|---|---|---|---|
| | ຈຳນວນ | ມູນຄ່າການຊື້ຂາຍ (ກີບ) | ຈຳນວນ | ມູນຄ່າການຊື້ຂາຍ (ກີບ) | ຈຳນວນ | ມູນຄ່າການຊື້ຂາຍ |
| BCEL | 1.658.830 | 7.311.267.300 | 1.107.000 | 4.881.390.000 | - 33,27 | -33,23 |
| EDL-GEN | 5.080.206 | 29.934.616.950 | 1.012.400 | 5.786.710.000 | - 80,07 | -80,67 |
| LWPC | 556 | 3.878.800 | 900 | 5.700.000 | 61,87 | 46,95 |
| PTL | 331.349 | 951.899.200 | 335.800 | 883.040.000 | 1,34 | -7,23 |
| SVN | 260.356 | 873.860.400 | 49.300 | 156.100.000 | -81,06 | -82,14 |
| ທັງໝົດ | 7.331.297 | 39.075.522.650 | 2.505.400 | 11.712.940.000 | -65,83 | -70,02 |

**ແຜນວາດ1: ດັດຊະນີຕະຫຼາດຫຼັກຊັບລາວ**

(ວັນທີ 11 ມັງກອນ - 22 ມິຖຸນາ 2016)




**ແຜນວາດ2: ມູນຄ່າການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ**

(ເດືອນ ມັງກອນ - ມີນາ 2016)

ຫົວໜ່ວຍ: ລ້ານກີບ



**ຕາຕະລາງ 2: ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດ**

| ຊື່ດັດສະນີ | ປະເທດ | ດັດຊະນີໃນໄຕມາດນີ້ | ດັດຊະນີໃນໄຕມາດກ່ອນ | ປ່ຽນແປງ | |
|---|---|---|---|---|---|
| | | | | +/- | % |
| I. ສະຫະລັດ | | | | | |
| DOW | ສ.ອາເມລິກາ | 17.829,73 | 17.502,59 | 327,14 | 1,87 |
| NASDAQ | ສ.ອາເມລິກາ | 4.843,76 | 4.768,86 | 74,9 | 1,57 |
| S&P500 | ສ.ອາເມລິກາ | 2.088,90 | 2.036,71 | 52,19 | 2,56 |
| II. ຕະຫຼາດຫຼັກຊັບເອີຣົບ | | | | | |
| Eurofirst 300 | ເອີຣົບ | 1.336,1 | 1.336,7 | -0,6 | -0,04 |
| DAX | ເຢຍລະມັນ | 10.015,54 | 10.022,93 | -7,39 | -0,07 |
| FTSE100 | ອັງກິດ | 6.226,55 | 6.199,11 | 27,44 | 0,44 |
| CAC40 | ຝຣັ່ງ | 4.367,24 | 4.423,98 | -56,74 | -1,28 |
| LUXXX | ລຸກຊໍາບວກ | 1461.809 | 1379.533 | 82.276 | 5.96 |
| III. ຕະຫຼາດຫຼັກຊັບອາຊີ | | | | | |
| NIKKEI225 | ຍີ່ປຸ່ນ | 16.169,11 | 17.000,98 | -831,87 | -4,89 |
| KOSPI | ສ.ເກົາຫຼີ | 1.982,7 | 1.995,12 | -12,42 | -0,62 |
| HANGSHENG | ຮ່ອງກົງ | 20.668,44 | 20.615,23 | 53,21 | 0,26 |
| TWSE | ໄຕ້ຫວັນ | 8.684,85 | 8.766,09 | -81,24 | -0,93 |
| SHANGHAI | ສປ. ຈີນ | 2.878,56 | 3.009,96 | -131,4 | -4,37 |
| SHENZHEN | ສປ. ຈີນ | 1.889,711 | 1.902,53 | -12,822 | -0,67 |
| S&P/ASX200 | ອົດສະຕາລີ | 5.274,40 | 5.142,30 | 132,1 | 2,57 |
| IV. ຕະຫຼາດຫຼັກຊັບອາຊຽນ | | | | | |
| ASEAN40 | ອາຊີ | 9.008,63 | 9.169 | -160,37 | -1,75 |
| STRAIT TIME | ສິງກະໂປ | 2.789,45 | 2.881,98 | -92,53 | -3,21 |
| SET | ໄທ | 1.430,80 | 1.412,16 | 18,64 | 1,32 |
| FBMLCI | ມາເລເຊຍ | 1.637,69 | 1.724,55 | -86,86 | -5,04 |
| JCI | ອິນໂດເນເຊຍ | 4.878,71 | 4.854,18 | 24,53 | 0,51 |
| PCOMP | ຟີລິບປິນ | 7.767,23 | 7.360,05 | 407,18 | 5,53 |
| HOCHIMIN | ສສ. ຫວຽດນາມ | 628 | 574,71 | 53,29 | 9,27 |
| HANOI | ສສ. ຫວຽດນາມ | 84,5 | 80,57 | 3,93 | 4,88 |
| CSX | ກໍາປູເຈຍ | 371,35 | 385,96 | -14,61 | -3,79 |
| LSX | ສປປ. ລາວ | 1.128,83 | 1.163,18 | -34,35 | -2,95 |
| MYANPIX | ມຽນມ້າ | 872,67 | ຍັງບໍ່ທັນເລີ່ມຊື້-ຂາຍ | 872,67 | #DIV/0! |
| V. ດັດຊະນີກຸ່ມທະນາຄານ | | | | | |
| NASDAQ BANK | ສ. ອາເມລິກາ | 2.770,42 | 2.659,89 | 110,53 | 4,2 |
| SET BANK | ໄທ | 456,02 | 496,78 | -40,76 | -8,2 |